# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດທີ 04 ມິຖຸນາ 2023 (06-04-2023)

---

## ເຢດໂຣແລະໂມເຊ

*ແມ່ນຫຍັງຄືສິ່ງທີ່ທ່ານໄດ້ຮຽນຮູ້ດ້ວຍວິທີທາງທີ່ຍາກ?*

**ຈຸດສຳຄັນໃນບົດຮຽນ:** ຈົ່ງກຽມພ້ອມທີ່ຈະມອບໃຫ້ແລະຈະຮັບເອົາສະຕິປັນຍາຂອງພຣະເຈົ້າ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ພວກເຮົາມີທາງເລືອກ: ພວກເຮົາສາມາດຮຽນຮູ້ຈາກປະສົບການຂອງຕົນເອງ, ຫຼື ຈາກປະສົບການຂອງຄົນອື່ນ. ການຮຽນຮູ້ຈາກປະສົບການຂອງຕົນເອງສາມາດເປັນການເຈັບປວດ, ອຸກອັ່ງ, ແລະໃຊ້ເວລາຫຼາຍ. ການຮຽນຮູ້ຈາກປະສົບການຂອງຄົນອື່ນໃຊ້ເວລາໜ້ອຍລົງ(ປະຢັດເວລາ) ແລະເຮັດໃຫ້ການເຈັບປວດແລະອຸກອັ່ງບາງທຸເລົາລົງ. ບຸກຄົນທີ່ສລາດອະນຸຍາດໃຫ້ຄົນອື່ນຜ່ານຄວາມເຄັ່ງຕຶງແລະຮຽນຮູ້ຈາກປະສົບການຂອງພວກເຂົາເຈົ້າ. ພວກເຮົາຕ້ອງການຜູ້ຄົນສາມຈຳພວກໃນຊີວິດຂອງພວກເຮົາດັ່ງຕໍ່ລົງໄປນີ້:

1. **ເພື່ອນຝູງ.** ບັນດາພວກທີ່ຍ່າງຄຽງຂ້າງພວກເຮົາຊຶ່ງແມ່ນຜູ້ທີ່ພວກເຮົາສາມາດອຸປຖັມຄ້ຳຊູແລະໜູນນ້ຳໃຈໃຫ້ແກ່ກັນແລະກັນ.
2. **ຜູ້ທີ່ໃຫ້ຄຳປຶກສາ.** ບັນດາພວກທີ່ເຮົາໄດ້ຮຽນຮູ້ນຳໃນຂນະທີ່ພວກເພິ່ນແບ່ງປັນສະຕິປັນຍາແລະບົດຮຽນແຫ່ງຊີວິດ. ພວກເພິ່ນທ້າທາຍພວກເຮົາໃຫ້ເຕີບໃຫຍ່ແລະຕື່ມເຕັມຄວາມສາມາດຂອງພວກເຮົາ.
3. **ຜູ້ທີ່ຮັບຄຳປຶກສາ.** ແຕ່ລະຄົນໃນພວກເຮົາສົມຄວນທີ່ຈະໃຫ້ຄຳປຶກສາແກ່ຄົນອື່ນ,ໃຜຜູ້ນຶ່ງຊຶ່ງພວກເຮົາສາມາດແບ່ງປັນປະສົບການຂອງພວກເຮົາ. ທຸກຄົນສາມາດໄດ້ຮັບຜົນປໂຍດຈາກສະຕິປັນຍາແລະປະສົບການຂອງຄົນອື່ນ, ແລະພວກເຮົາສາມາດແບ່ງປັນສິ່ງເຫຼົ່ານັ້ນກັບຄົນອື່ນ.

ການສຶກສາໃນວັນນີ້ເບິ່ງທີ່ເຫດການສັ້ນໆຂອງການໃຫ້ຄຳປຶກສາໃນຊີວິດຂອງໂມເຊ. ຖ້າປາສຈາກການໃຫ້ຄຳປຶກສາທີ່ເກີດຂຶ້ນ, ຊີວິດຂອງໂມເຊອາດຈະແຕກຕ່າງໄປຈາກເດີມ.

**ພຣະຄັມພີກ່າວວ່າແນວໃດ?** (ເບິ່ງຕາມຫົວຂໍ້ 1, 2 ແລະ 3,)

### ການສຶກສາພຣະຄັມພີ

### 1. <u>ອົບພະຍົບ 18:9-11</u>

*9 ເຢດໂຣກໍມີຄວາມຍິນດີທີ່ໄດ້ຮູ້ເຖິງ ພຣະກະລຸນາທັງຫລາຍຊຶ່ງພຣະຜູ້ເປັນເຈົ້າໄດ້ສະແດງແກ່ຄົນອິສຣາເອນທີ່ພຣະອົງ ໄດ້ຊ່ວຍພວກ*
*ເຂົາໃຫ້ລອດພົ້ນຈາກເງື້ອມມືຊາວເອຢິບ 10 ເຢດໂຣຈຶ່ງກ່າວວ່າ "ສາທຸການແດ່ພຣະຜູ້ເປັນເຈົ້າຜູ້ຊົງຊ່ວຍເຈົ້າທັງຫລາຍໃຫ້ລອດພົ້ນຈາກ*
*ເງື້ອມມືຊາວເອຢິບແລະຈາກເງື້ອມມືຂອງຟາຣາໂອ ແລະຊ່ວຍໄພ່ພົນໃຫ້ພົ້ນຈາກມືຂອງຊາວເອຢິບ 11 ບັດນີ້ເຮົາຮູ້ວ່າພຣະຜູ້ເປັນເຈົ້າ-*
*ຊົງເປັນໃຫຍ່ກວ່າພະທັງປວງ ໃຫຍ່ກວ່າພະເຫລົ່ານັ້ນທີ່ໄດ້ກະທຳຕໍ່ ຊົນຊາດອິສຣາເອນຢ່າງທະນົງອົງອາດ"*

ໂມເຊ, ຜູ້ນຳຊາວອິສຣາເອັນຜູ້ຍິ່ງໃຫຍ່ໃນການອົບພະຍົບອອກຈາກປະເທດເອຢິບ, ໄດ້ຮັບຜົນປໂຍດຈາກຄວາມສຳພັນໃນການປຶກສາຈາກເຢດໂຣພໍ່ເຖົ້າຂອງລາວ, ໃນຊ່ວງປີແລກຂອງການເດີນທາງອອກຈາກປະເທດເອຢິບ. ພວກເຮົາໄດ້ອ່ານກ່ຽວກັບການພົບປະຂອງໂມເຊກັບເຢດໂຣ(ຊຶ່ງເອີ້ນວ່າເຣອູເອນ)ຄັ້ງແລກໃນພຣະຄັມພີອົບພະຍົບບົດທີ່ 2 ຂໍ້ 16 ຫາ 21. ຫຼັງຈາກປົບໜີຈາກກະສັດຟາຣາໂອໃນປະເທດເອຢິບ, ໂມເຊໄດ້ພົບເຢດໂຣໃນດິນແດນມີດີອານ. ພາຍຫຼັງຕໍ່ມາ, ໂມເຊໄດ້ແຕ່ງງານກັບນຶ່ງໃນຈຳນວນລູກສາວຂອງເຢດ

ໂຣຊື່ວ່າຊິບໂປຣາ. ພາຍໃນລະຍະ 40 ປີຕໍ່ມາ, ໂມເຊໄດ້ລ້ຽງເກືອຮັກສາຝູງແກະຂອງເຢດໂຣໃນເຂດຖິ່ນແຫ້ງແລ້ງກັນດານຂອງມີດີອານ. ຫຼັງຈາກທີ່ໂມເຊໄດ້ພົບກັບພຣະເຈົ້າຢູ່ທີ່ໄຟໄໝ້ພຸ່ມໄມ້ (ອພຍ 3:2), ລາວໄດ້ຕັດສິນໃຈກັບຄືນໄປປະເທດເອຢິບກັບເມັຽແລະຄອບຄົວຂອງລາວ. ເມື່ອເຖິງຈຸດນີ້ງ,ໃນລະຫວ່າງການເດີນທາງກັບຄືນໄປປະເທດເອຢິບ ຫຼືຫຼັງຈາກມາຮອດປະເທດເອຢິບແລ້ວ, ໂມເຊໄດ້ສົ່ງຊິບໂປຣາ ແລະລູກຊາຍສອງຄົນກັບຄືນໄປຫາເຢດໂຣ (ອພຍ 18:2). ເຫດຜົນສຳລັບການກະທຳນີ້ຍັງຄົງເປັນຄວາມລຶກລັບ, ແຕ່ບາງທີໂມເຊອາດຈະໄດ້ເຮັດເພື່ອປົກປ້ອງພວກເຂົາເຈົ້າຈາກຄວາມໂກດແຄ້ນຂອງກະສັດຟາຣາໂອໃນລະຫວ່າງຫລາຍເດືອນກ່ອນເຫດການອົບພະຍົບເລີ່ມຕົ້ນ.

ເມື່ອພວກເຮົາມາເຖິງພຣະຄັມພີອົບພະຍົບບົດທີ່ 18, ໂມເຊແລະລູກຫຼານຂອງອິສຣາເອນໄດ້ປະສົບການກັບໂຣຄລະບາດໃນເອຢິບ ແລະໄດ້ປະສົບກັບການມະຫັສຈັນຫຼາຍຢ່າງ: ການຜ່ານມະຫາສມຸດແດງ(the Red Sea), ນ້ຳໄຫຼອອກມາຈາກກ້ອນຫີນ, ນົກກະທາ, ແລະມານາປະຈຳວັນໃນລະຫວ່າງຖິ່ນທຸລະກັນດານ. ໃນເວລານັ້ນ, ພວກເຂົາເຈົ້າໄດ້ຕັ້ງຄ້າຍຢູ່ທີ່ເມືອງເຣຟີດິມ, ບໍ່ໄດ້ໄກຈາກພູເຂົາຊີນາຍ, ບ່ອນທີ່ຜູ້ຄົນຈະໄດ້ປະສົບໜ້າກັບພຣະເຈົ້າໃນເວລາບໍ່ດົນຕໍ່ມາ. ແມ່ນຢູ່ທີ່ເຣຟີດິມທີ່ເຢດໂຣໄດ້ຕາມທັນໂມເຊເພື່ອມອບຊິບໂປຣາແລະລູກຊາຍທັງສອງຂອງນາງໃຫ້ແກ່ໂມເຊ.

*ແມ່ນຫຍັງຄືຜົນປະໂຍດບາງຢ່າງຂອງການຮັບຮູ້ພາຣະກິດຂອງພຣະເຈົ້າ?*

ເຢດໂຣໄດ້ຖືກລະບຸວ່າເປັນ "ປະໂລຫິດແຫ່ງມີດຽນ" (ຂໍ້ 1). ໃນຂນະທີ່ບໍ່ມີການກ່າວເຖິງຢູ່ໃນຈຸດນີ້ກ່ຽວກັບພຣະເຈົ້າທີ່ລາວເປັນຕົວແທນ, ໃນຂໍ້ທີ 11 ເຢດໂຣໄດ້ປະກາດວ່າ "ຕອນນີ້ຂ້ອຍຮູ້ວ່າພຣະຜູ້ເປັນເຈົ້າຍິ່ງໃຫຍ່ກວ່າພະທັງປວງ." ການໄດ້ຍິນວິຖີທາງທັງໝົດທີ່ພຣະເຈົ້າໄດ້ຊົງກະທຳຕາງໜ້າຂອງປະຊາກອນຂອງພຣະອົງ, ເຢດໂຣໄດ້ຮັບຮູ້ຄວາມຍິ່ງໃຫຍ່ຂອງພຣະ**ເຈົ້າພຣະເຢໂຮວາ**, ລາວໄດ້ຖວາຍເຄື່ອງເຜົາບູຊາຖວາຍແກ່ພຣະເຈົ້າ. ອາຫານຄາບໃຫຍ່ໄດ້ຈັດຂຶ້ນໃນທີ່ປະທັບຂອງພຣະເຈົ້າເຊິ່ງລວມເຖິງເຢດໂຣ, ໂມເຊ, ອາໂຣນ ພ້ອມທັງບັນດາເຖົ້າແກ່ຂອງຊົນເຜົ່າຂອງອິສຣາເອນ ເພື່ອເປັນການສເລີມສລອງດ້ວຍຄວາມຍິນດີໃນສິ່ງທັງປວງທີ່ພຣະເຈົ້າໄດ້ຊົງກະທຳແກ່ຊົນຊາດຈົນເຖິງຈຸດນີ້ (ຂໍ້ 12). ດັ່ງນັ້ນ, ຈຶ່ງເປັນຈຸດເລີ້ມຕົ້ນທີ່ສັ້ນໆແຕ່ສຳຄັນໃນການໃຫ້ຄຳແນະນຳລະຫວ່າງເຢດໂຣແລະໂມເຊ.

ຄວາມສຳພັນຂອງການໃຫ້ຄຳແນະນຳປຶກສາລະຫວ່າງເຢດໂຣແລະໂມເຊແມ່ນສັ້ນໆ; ເຖິງຢ່າງໃດກໍຕາມ, ມັນເປັນກຳໄລຫຼາຍທີ່ສຸດສຳລັບໂມເຊ. ຫຼັງຈາກການສເລີມສລອງການນະມັສການຄັ້ງແລກຂອງທຸກສິ່ງທີ່ພຣະເຈົ້າໄດ້ຊົງກະທຳເພື່ອລູກຫຼານຂອງອິສຣາເອນ, ເຢດໂຣຈະໃຊ້ເວລາອີກສອງສາມວັນໃນຄ້າຍ. ໃນຊ່ວງເວລານີ້, ລາວໄດ້ເລີ້ມສັງເກດເຫັນບາງສິ່ງບາງຢ່າງທີ່ລົບກວນລາວຢ່າງຫຼວງຫຼາຍ.

## 2. ອົບພະຍົບ 18:14-18

*[14] ເມື່ອພໍ່ເຖົ້າຂອງໂມເຊເຫັນງານທັງປວງທີ່ໂມເຊກະທຳເພື່ອໄພ່ພົນເຊັ່ນນັ້ນຈຶ່ງກ່າວວ່າ "ເຈົ້າໃຊ້ວິທີນີ້ບໍ່ປະຕິບັດກັບໄພ່ພົນ? ເຫດໃດເຈົ້າຈຶ່ງນັ່ງເຮັດວຽກຢູ່ແຕ່ຜູ້ດຽວແລະໄພ່ພົນທັງປວງກໍຍືນອ້ອມເຈົ້າຕັ້ງແຕ່ເຊົ້າຈົນຄ່ຳ" [15] ໂມເຊຈຶ່ງຕອບພໍ່ເຖົ້າວ່າ "ເພາະໄພ່ພົນມາຫາຂ້ອຍເພື່ອຂໍໃຫ້ທູນຖາມພຣະເຈົ້າ [16] ເມື່ອພວກເຂົາມີການໂຕ້ຖຽງກັນກໍມາຫາຂ້ອຍ. ຂ້ອຍກໍຕັດສິນຄວາມລະຫວ່າງເຂົາກັບເພື່ອນບ້ານ-ສອນເຂົາໃຫ້ຮູ້ຈັກກົດເກນຂອງພຣະເຈົ້າແລະກົດໝາຍຂອງພຣະອົງ" [17] ຝ່າຍພໍ່ເຖົ້າຂອງໂມເຊຈຶ່ງກ່າວແກ່ເພິ່ນວ່າ "ເຈົ້າເຮັດຢ່າງນີ້-ແມ່ນບໍ່ດີ [18] ທັງເຈົ້າແລະໄພ່ພົນທີ່ມາຫາເຈົ້ານັ້ນຈະອ່ອນໃຈ ເພາະພາລະອັນໜັກນີ້ເຫລືອກຳລັງຂອງເຈົ້າ ເຈົ້າບໍ່ສາມາດທີ່ຈະເຮັດແຕ່ຜູ້ດຽວໄດ້".*

**ຄວາມຍຸ້ງຍາກໃນສາຍສັມພັນເກີດຂຶ້ນໄດ້.** ພວກເຮົາເປັນຄົນບາບ, ແລະຄວາມບໍ່ເຫັນດີ(ຂັດແຍ່ງ)ແລະການ ໂຕ້ຖຽງກັນຈະເກີດຂຶ້ນ. ດັ່ງເຊັ່ນກໍລະນີຖ້າມກາງບັນດາລູກຫຼານຂອງອິສຣາເອນໃນຂນະທີ່ພວກເຂົາເຈົ້າເດີນທາງຈາກເອຢິບມຸ່ງໜ້າສູ່ດິນແດນທີ່ພຣະເຈົ້າໄດ້ຊົງສັນຍາຈະມອບໃຫ້ແກ່ພວກເຂົາເຈົ້າ(ດິນແດນແຫ່ງພຣະສັນຍາ). ເມື່ອທ່ານພິຈາລະນາວ່າປະເທດຊາດປະກອບດ້ວຍຫລາຍພັນຄອບ

ຄືວ, ທ່ານຈະມີຄວາມຄິດກ່ຽວກັບການທ້າທາຍທີ່ໂມເຊປະເຊີນໜ້າ. ລາວໄດ້ພົບເຫັນຕົນເອງໄດ້ໃຊ້ເວລາໝົດມື້ໃນການຕັດສິນໃຈລະຫວ່າງຊາຍຜູ້ນຶ່ງກັບຊາຍອີກຜູ້ນຶ່ງເພື່ອແກ້ໄຂບັນຫາຕ່າງໆ.

ຜ່ານການສັງເກດການ, ເຢດໂຣໄດ້ແຍກແຍະສະຖານະການທີ່ຫຍຸ້ງຍາກທີ່ໂມເຊແລະປະຊາຊົນທັງສອງຢູ່ໃນນັ້ນ. ຜູ້ຄົນຕ້ອງຢືນໝົດມື້ລໍຖ້າທີຂອງຕົນທີ່ຈະເວົ້າກັບໂມເຊ, ຊຶ່ງຕາມພາກສ່ວນຂອງລາວ, ບໍ່ມີເວລາວ່າງເລີຍ ລາວໄດ້ສົນລະວົນຢ່າງຕໍ່ເນື່ອງຢູ່ໃນເຣື່ອງທີ່ໄຮ້ສາລະເຫຼົ່ານີ້ ໃນຂນະເວລາທີ່, ສ່ວນຫຼາຍອາດຈະມີຫຼາຍເຣື່ອງທີ່ຮີບດ່ວນທີ່ລາວຄວນຈະເຂົ້າຮ່ວມ. ທ້າຍທີ່ສຸດແລ້ວ, ວຽກງານຂອງໂມເຊແມ່ນເພື່ອເຮັດໃຫ້ກຸ່ມອະດີດຂ້າທາດນີ້ໃຫ້ເປັນປະເທດທີ່ມີການຈັດຕັ້ງຢ່າງເປັນລະບຽບທີ່ຕິດຕາມພຣະເຈົ້າ. ເຢດໂຣສເນີວິທີການທີ່ດີໃນການໃຫ້ຄໍາປຶກສາໃນເມື່ອລາວປຸ່ງການສັງເກດການຂອງລາວເປັນຄໍາຖາມ. *"ນີ້ເຈົ້າເຮັດຫຍັງເພື່ອປະຊາຊົນ? ເປັນຫຍັງເຈົ້າຈຶ່ງນັ່ງເປັນຜູ້ພິພາກສາຄົນດຽວ ໃນຂນະທີ່ປະຊາຊົນທັງປວງຢືນອ້ອມຮອບເຈົ້າຢູ່ຕັ້ງແຕ່ເຊົ້າຈົນຄໍ່າ?"* ເຢດໂຣຕ້ອງການທີ່ຈະໄດ້ຍິນຈາກປາກຂອງໂມເຊຄໍາອະທິບາຍສໍາລັບສະຖານະການອັນໜັກໜ່ວງນີ້. ຄໍາຖາມທີ່ລາວຖາມອາດຈະຊ່ວຍເຢດໂຣໃຫ້ເຂົ້າໃຈສະພາບການ ແລະອາດພິສູດໃຫ້ເຫັນວ່າມັນເປັນການເປີດຫູເປີດຕາສໍາລັບໂມເຊ. ການສອບຖາມຂອງເຢດໂຣອາດໄດ້ພິສູດໃຫ້ໂມເຊເຫັນເຖິງຄວາມສໍາຄັນຂອງສະຖານະການ. ນີ້ແມ່ນເຫັນໄດ້ໃນຄໍາເວົ້າຂອງເຢດໂຣ: "**ສິ່ງທີ່ເຈົ້າເຮັດນັ້ນບໍ່ດີ.**"

ນີ້ແມ່ນວຽກງານຂອງໃຜກໍຕາມທີ່ທໍາໜ້າທີ່ເປັນຜູ້ທີ່ໃຫ້ຄໍາປຶກສາ. ໂດຍຜ່ານການສັງເກດການແລະຄໍາຖາມ, ຜູ້ໃຫ້ຄໍາແນະນໍາສາມາດນໍາພາຜູ້ທີ່ຖືກຊ່ວຍເຫຼືອໄປສູ່ຄວາມເຂົ້າໃຈຂອງຕົນເອງກ່ຽວກັບສະຖານະການ. ເມື່ອພວກເຂົາເຈົ້າມາຮອດຈຸດທີ່ມອງເຫັນບັນຫາຫຼືສິ່ງທ້າທາຍ, ພວກເຂົາເຈົ້າພ້ອມແລ້ວທີ່ຈະກ້າວຕໍ່ໄປໃນວິທີການແກ້ໄຂແລະຈັດການກັບສະຖານະການ. <u>ແຕ່ກ່ອນອື່ນໝົດ</u>, ພວກ<u>ເຂົາເຈົ້າຈະຕ້ອງສາມາດເຫັນບັນຫາແລະແຍກແຍະບັນຫານັ້ນໄດ້</u>.

*ແມ່ນຫຍັງຄືຄວາມແຕກຕ່າງລະຫວ່າງການຕິເພື່ອກໍ່ແລະ ພຽງແຕ່ການຕິ(ໃສ່ຮ້າຍປ້າຍສີ)ເທົ່ານັ້ນ?*

## 3. <u>ອົບພະຍົບ 18:19-21</u>

*[19] ຈົ່ງຟັງສຽງຂອງເຮົາແດ່ເຮົາຈະໃຫ້ຄໍາແນະນໍາແກ່ເຈົ້າແລະຂໍໃຫ້ພຣະເຈົ້າຊົງສະຖິດຢູ່ກັບເຈົ້າ. ເຈົ້າຈົ່ງເປັນຜູ້ແທນຂອງໄພ່ພົນຕໍ່ພຣະ-*
*ເຈົ້ານໍາຄວາມກາບທູນພຣະເຈົ້າ [20] ເຈົ້າຈົ່ງສັ່ງສອນເຂົາໃຫ້ຮູ້ກົດແລະບັນຍັດຕ່າງໆແລະສະແດງໃຫ້ເຂົາຮູ້ຈັກທາງທີ່ເຂົາຕ້ອງດໍາເນີນ-*
*ຊີວິດແລະສິ່ງທີ່ຕ້ອງປະຕິບັດ. [21] ຍິ່ງກວ່ານັ້ນ, ເຈົ້າຈົ່ງເລືອກຄົນທີ່ມີຄວາມສາມາດຈາກພວກໄພ່ພົນຄືຄົນທີ່ຢໍາເກງພຣະເຈົ້າ ໄວ້ໃຈໄດ້*
*ແລະກຽດຊັງສິນບົນ. ແຕ່ງຕັ້ງຄະນະຢ່າງນີ້ໄວ້ເປັນຜູ້ປົກຄອງຄົນພັນຄົນ, ຮ້ອຍຄົນ, ຫ້າສິບຄົນ, ແລະສິບຄົນ.*

ພຽງແຕ່ຫຼັງຈາກສັງເກດການແລະໄດ້ຟັງຈາກໂມເຊເທົ່ານັ້ນທີ່ເຢດໂຣສເນີໃຫ້ຄໍາປຶກສາແກ່ໂມເຊ. ເຢດໂຣໄດ້ຍອມຮັບຮູ້ສອງໜ້າທີ່ຊຶ່ງໄດ້ລະບຸໄວ້ໃນຂໍ້ 16 ຄື: (1) ໂມເຊໄດ້ເປັນຕົວແທນຂອງປະຊາກອນຂອງພຣະເຈົ້າແລະໄດ້ນໍາເອົາຄະດີຂອງພວກເຂົາເຈົ້າມາສເນີຕໍ່ພຣະເຈົ້າ; ແລະ (2) ໂມເຊໄດ້ເປັນຕົວແທນຂອງພຣະເຈົ້າຕໍ່ໜ້າປະຊາຊົນ, ສັ່ງສອນພວກເພິ່ນໃຫ້ເຮັດຕາມວິຖີທາງຂອງພຣະອົງ. ແນ່ນອນ, ສິ່ງເຫຼົ່ານີ້ແມ່ນວຽກງານທີ່ສໍາຄັນແຕ່ໂມເຊບໍ່ໄດ້ເຮັດໂດຍລໍາພັງຕົວເອງ. ເຢດໂຣໄດ້ເວົ້າວ່າວຽກງານທີ່ສໍາຄັນຂອງໂມເຊແມ່ນ<u>ເປັນຕົວແທນລະຫວ່າງພຣະເຈົ້າກັບປະຊາກອນຂອງອິສຣາເອນ</u>. ໂມເຊຈໍາເປັນຕ້ອງ: *"ສັ່ງສອນເຂົາໃຫ້ຮູ້ກົດແລະບັນຍັດຕ່າງໆ-ແລະສະແດງໃຫ້ເຂົາຮູ້ຈັກທາງທີ່ເຂົາຕ້ອງດໍາເນີນຊີວິດແລະສິ່ງທີ່ຕ້ອງປະຕິບັດ."* (ຂໍ້ 20).

*ກຸ່ມຂອງພວກເຮົາມີບົດບາດອັນໃດໃນການຊ່ວຍເຫຼືອຊຶ່ງກັນແລະກັນໃຫ້ໄດ້ຮັບຄໍາແນະນໍາທີ່ດີ?*

ເຢດໂຣຫັນຕໍ່ໄປຫາວຽກງານທີ່ເອົາເວລາຂອງໂມເຊໄປໝົດ ແລະວຽກງານທີ່ຢຸດຢັ້ງລາວຈາກການໃຫ້ຄວາມສົນໃຈຢ່າງເຕັມປຸ່ງໃນການໃຫ້ຄໍາແນະນໍາແລະສັ່ງສອນແກ່ປະຊາຊົນນັ້ນຄື: <u>ຮັບໃຊ້ໃນຖານະຜູ້ຕັດສິນຄວາມ(ພິພາກສາ)ແລະຜູ້ໄກ່ເກັ່ຽໃນກໍລະນີທີ່ມີຄວາມຂັດແຍ້ງເກີດຂຶ້ນ.</u> ມັນແມ່ນຈຸດນີ້ລະທີ່ເຢດໂຣໄດ້ຢໍ້າໃຫ້ເຫັນເຖິງຈຸດອ່ອນທີ່ຍິ່ງໃຫຍ່ທີ່ສຸດໃນວິທີການຂອງໂມເຊໃນການເປັນຜູ້ນໍາ, ເພາະວ່າວິທີການຂອງລາວໃນປະຈຸບັນຈະເຮັດໃຫ້ທັງສອງຄືໂມເຊແລະປະຊາຊົນເສື່ອມເສັຽໝົດໄປ. ເຢດໂຣໄດ້ໃຫ້ຄໍາປຶກສາແກ່ລູກເຂີຍຂອງລາວ(ໂມເຊ)ໃຫ້ແບ່ງປັນໜ້າທີ່ລະຫວ່າງບັນດາຜູ້ຊາຍທີ່ມີຄວາມສາມາດທີ່ຈະເອົາພາລະເຫຼົ່ານີ້ອອກໄປຈາກໂມເຊ. ຜູ້ຊາຍ

ເຫຼົ່ານີ້ຈະຕ້ອງໄດ້ຮັບການສະແດງໃຫ້ເຫັນໂດຍລັກສະນະທີ່ສຳຄັນບາງຢ່າງ. ພວກເຂົາເຈົ້າຈະຕ້ອງເປັນຄົນທີ່ມີຄວາມສາມາດທີ່ມີຄວາມໄວ້ວາງໃຈຢ່າງໜັກແໜ້ນໃນພຣະເຈົ້າ. ນອກຈາກນີ້, ພວກເຂົາເຈົ້າຕ້ອງເປັນຄົນສັດຊື່ແລະບໍ່ໂລບເພື່ອຜົນປໂຍດກຳໄລສຳລັບຕົນເອງ.

ໃນຄວາມສຳພັນທີ່ໃຫ້ຄຳແນະນຳປຶກສາອັນໃດອັນນຶ່ງ, ເປົ້າໝາຍທີ່ສຳຄັນສົມຄວນຈະລວມເຖິງການສອນກ່ຽວກັບພຣະເຈົ້າແລະວິທີທາງຂອງພຣະອົງ. ການແນະນຳປຶກສາຄວນຈະນຳພາຄົນອື່ນໆໃຫ້ເຂົ້າໃຈ **"ວິຖີຊີວິດ"**("way to live") **ທີ່ຈະເຮັດໃຫ້ພຣະເຈົ້າພໍພຣະທັຍແລະເປັນທີ່ຖວາຍພຣະກຽດຕິຍົດແກ່ພຣະເຈົ້າ**. ນອກຈາກນີ້, ຄວາມສຳພັນໃນການໃຫ້ຄຳແນະນຳປຶກສາທີ່ດີຄວນ**ສຸມໃສ່** ບໍ່ພຽງແຕ່ການກຳນົດບັນຫາ ແຕ່ ການຄົ້ນພົບວິທີແກ້ໄຂ.

*ພວກເຮົາໄດ້ຮຽນຮູ້ຫຍັງຈາກຄວາມສັມພັນລະຫວ່າງເຢດໂຣກັບໂມເຊ?*

## ນຳໃຊ້ໃນຊີວິດ

ຈົ່ງກຽມພ້ອມທີ່ຈະມອບໃຫ້ແລະຈະຮັບເອົາສະຕິປັນຍາຂອງພຣະເຈົ້າ. ທ່ານຈະເຮັດແນວໃດເພື່ອດຳເນີນຊີວິດໃນຄວາມຈິງນີ້? ຈົ່ງເລືອກໃຊ້ນຶ່ງໃນການນຳໃຊ້ໃນຊີວິດຕໍ່ລົງໄປນີ້:

- **ຈົ່ງອະທິຖານ.** ພາຍໃນລະຍະອາທິດທີ່ຈະມາເຖິງນີ້, ຈົ່ງອະທິຖານແຕ່ລະວັນທູນຂໍຕໍ່ພຣະເຈົ້າໃຫ້ພຣະອົງຊົງວາງລົງໃສ່ໃນຫົວໃຈທ່ານ ໃຜຜູ້ນຶ່ງຊຶ່ງທ່ານປາຖນາຈະຮຽນຮູ້ນຳ **ຫຼື** ໃຜຜູ້ນຶ່ງຊຶ່ງທ່ານສາມາດຊ່ວຍເຫຼືອ.
- **ຈົ່ງສແວງຫາ.** ຈົ່ງສແວງຫາໃຜຜູ້ນຶ່ງໂດຍເຈດຕະນາຜູ້ຊຶ່ງສາມາດຮັບໃຊ້ທ່ານໃນນາມຜູ້ໃຫ້ຄຳປຶກສາແກ່ທ່ານ. ຈົ່ງຂໍຮ້ອງລາວໃຫ້ພິຈາລະນາອະທິຖານທີ່ຈະເດີນຄຽງຂ້າງທ່ານ **ແລະ** ຊ່ວຍທ່ານໃຫ້ເຕີບໃຫຍ່.
- **ຈົ່ງລົງທຶນ.** ຈົ່ງເລືອກທີ່ຈະໃຫ້ຄຳປຶກສາແກ່ຄົນອື່ນ. ຈົ່ງຖາມລາວຫຼືນາງວ່າເພິ່ນມີຄວາມປາຖນາທີ່ຈະເດີນຄຽງຂ້າງທ່ານ **ແລະ** ອະນຸຍາດໃຫ້ທ່ານເວົ້າກ່ຽວກັບຊີວິດຂອງລາວຫຼືຂອງນາງ (ນີ້ຄວນຈະເປັນຄົນເພດດຽວກັນ).

ບໍ່ມີຜູ້ໃດທີ່ຈະມັກຮຽນຮູ້ໂດຍວິທີທີ່ຍາກ. ມັນເປັນການດີຫຼາຍກວ່າທີ່ຈະຫາໃຜຜູ້ນຶ່ງຊຶ່ງໄດ້ຜ່ານປະສົບການມາແລ້ວໃນແຜນການທີ່ທ່ານມີແຜນຈະເຮັດ **ແລະ** ຮຽນຮູ້ຈາກສະຕິປັນຍາຂອງເພິ່ນ. **ພຣະເຈົ້າຊົງວາງບຸກຄົນຜູ້ນີ້ໄວ້ໃນຊີວິດຂອງພວກເຮົາດ້ວຍເຫດຜົນໃດເຫດຜົນນຶ່ງ!**

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ** SSK